ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ
ກົມພາສີ

ເລກທີ 03633 /ກພສ.

ນະຄອນຫຼວງວຽງຈັນ, ວັນທີ 02 ມິຖຸນາ 2023

# ແຈ້ງການ

**ເຖິງ:** ຫົວໜ້າພະແນກອ້ອມຂ້າງກົມພາສີ, ຫົວໜ້າພາສີປະຈຳແຂວງ, ນະຄອນຫລວງວຽງຈັນ, ດ່ານພາສີຊາຍແດນ ໃນຂອບເຂດ ທົ່ວປະເທດ ແລະ ບໍລິສັດບີແວັກ (ລາວ) ຈຳກັດ BIVAC (LAO) Co., Ltd.

**ເລື່ອງ:** ການກຳນົດມູນຄ່າບໍລິການຈັດເກັບຄ່າບໍລິການ ການພັດທະນາໂຄງການປະຕູດຽວແຫ່ງຊາດ ແລະ ຄ່າການບຳລຸງຮັກສາອຸປະກອນ ການພັດທະນາໃນການເຊື່ອມຕໍ່ການຕິດຕັ້ງລະບົບການຄຸ້ມຄອງ ການຊຳລະພາສີ-ອາກອນ, ຄ່າທຳນຽມ ແລະ ຄ່າບໍລິການ ແບບລວມສູນ (ໂຄງການ Smart Customs) ຂອງຂະແໜງພາສີ.

- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ ສະບັບເລກທີ 2059/ກງ, ລົງວັນທີ 29 ເມສາ 2021 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມພາສີ;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ ສະບັບເລກທີ 0289/ກງ, ລົງວັນທີ 30 ມັງກອນ 2023 ວ່າດ້ວຍການອະນຸມັດໃຫ້ປັບເນື້ອໃນຢູ່ໃນມາດຕາ 15.1 ຂອງສັນຍາໃນການຈັດເກັບຄ່າບໍລິການ ຂອງສັນຍາສະບັບລົງວັນທີ 28 ມັງກອນ 2013;

ເພື່ອຮັບປະກັນການຈັດຕັ້ງປະຕິບັດ ຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ ສະບັບເລກທີ 0289/ກງ ລົງວັນທີ 30 ມັງກອນ 2023 ໃຫ້ມີຄວາມເປັນເອກະພາບກັນໃນການຄຸ້ມຄອງ ໃນຂອບເຂດທົ່ວປະເທດ ແລະ ສາມາດກວດສອບ ໄດ້ຕາມລະບຽບການ.

**ກົມພາສີ ອອກແຈ້ງການ ດັ່ງນີ້:**

1. ການຈັດເກັບຄ່າບໍລິການ ແຈ້ງພາສີປະຕູດຽວແຫ່ງຊາດ ແມ່ນໃຫ້ປະຕິບັດຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ ສະບັບເລກທີ 0289/ກງ, ລົງວັນທີ 30 ມັງກອນ 2023 ຈຳນວນ: 291.000 ກີບຕໍ່ທຸລະກຳ ແມ່ນໃຫ້ດຳເນີນການ ຄືດັ່ງນີ້:

1) ມູນຄ່າບໍລິການ ການສຳປະທານ ການປະຕິບັດໂຄງການປະຕູດຽວແຫ່ງຊາດ ແລະ ຄ່າບຳລຸງຮັກສາອຸປະກອນການພັດທະນາໃນການເຊື່ອມຕໍ່ການຕິດຕັ້ງລະບົບການຄຸ້ມຄອງ ການຊຳລະພາສີ-ອາກອນ, ຄ່າທຳນຽມ ແລະ ຄ່າບໍລິການ

ແບບລວມສູນ (ໂຄງການ Smart Customs) ຂອງຂະແໜງພາສີ) ຈຳນວນ, 291.000 ກີບຕໍ່ທຸລະກຳ ໂດຍມອບເຂົ້າບັນຊີ ຂອງ ບໍລິສັດບີແວັກ (ລາວ) ຈຳກັດ BIVAC (LAO) Co., Ltd. ຕາມໝາຍເລກບັນຊີດື:

- ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໝາຍເລກບັນຊີ 0101100001181791001;
- ທະນາຄານພັດທະນາລາວ ໝາຍເລກບັນຊີ 0302000010003513;

2) ໃຫ້ພະແນກຄຸ້ມຄອງລະບົບຂໍ້ມູນຂ່າວສານ ແລະ ແຜນການ ກົມພາສີ, ພາສີປະຈຳແຂວງ, ພາສີນະຄອນຫລວງ, ດ່ານພາສີຊາຍແດນ ແລະ ບໍລິສັດບີແວັກລາວ ຈຳກັດ BIVAC (LAO) Co., Ltd. ສະຫລຸບ, ຕິດຕາມການລາຍຮັບດັ່ງກ່າວ ຮ່ວມກັນ ເປັນແຕ່ລະເດືອນ, 03 ເດືອນ, 06 ເດືອນ, 09 ເດືອນ ແລະ ປີ;

2. ການຈັດຕັ້ງປະຕິບັດຕົວຈິງ ຫາກພົບບັນຫາ ຫຼື ຂໍ້ຫຍຸ້ງຍາກ ໃຫ້ສັງລວມ, ລາຍງານ ກົມພາສີ ເພື່ອເປັນຂໍ້ມູນໃນການລາຍງານ ກະຊວງການເງິນ ມີທິດຊີ້ນຳໃນການຈັດຕັ້ງປະຕິບັດ ໃຫ້ທັນກັບສະພາບການ;

3. ແຈ້ງການ ສະບັບນີ້ ມີຜົນນຳໃຊ້ນັບແຕ່ວັນທີ **08 ພຶດສະພາ 2023** ເປັນຕົ້ນໄປ ຈົນກ່ວາຈະມີການປັບປຸງປ່ຽນ ແປງ, ແຈ້ງການໃດ ທີ່ຂັດກັບແຈ້ງການສະບັບນີ້ແມ່ນຖືວ່າລົບລ້າງ.

ດັ່ງນັ້ນ, ຈຶ່ງແຈ້ງມາ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ..

**ຫົວໜ້າກົມ**

ກະຊວງການເງິນ
ກົມພາສີ

ພູເຂົາຄຳ ວັນນະວົງໄຊ